ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 13779/ຍທຂ

ນະຄອນຫລວງວຽງຈັນ, ວັນທີ 21 ສິງຫາ 201

ຮຽນ: ທ່ານລັດຖະມົນຕີ ວ່າການກະຊວງ ແຜນການ ແລະ ການລົງທຶນ

ທ່ານ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກໍາ ແລະ ການຄ້າ

ເລື່ອງ: ລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມ ໃນຂະແໜງ ໂຍທາທິການ ແລະ ຂົນສົ່ງ

- ອີງຕາມ ດໍາລັດວ່າດ້ວຍການຮັບຮອງເອົາບັນຊີທຸລະກິດຄວບຄຸມ ສະບັບເລກທີ 68/ນຍ, ລົງວັນທີ 28/4/2008

ກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດສະເໜີມາຍັງທ່ານຊາບກ່ຽວກັບ ລາຍການບັນຊີທຸລະກິດ ຄວບຄຸມ ໃນຂະແໜງ ໂຍທາທິການ ແລະ ຂົນສົ່ງ ດັ່ງລາຍລະອຽດດັ່ງຕໍ່ໄປນີ້:

| ລ/ດ | ລະຫັດ | ປະເພດທຸລະກິດ | ເງື່ອນໄຂ |
|---|---|---|---|
| I | | ຂະແໜງຂົນສົ່ງ | |
| 1 | | ການຂົນສົ່ງໂດຍສານດ້ວຍ ລົດ ແທັກຊີມິເຕີ | 1. ລະດັບຜູ້ບໍລິຫານຕ້ອງມີປະສົບການຄຸ້ມຄອງທຸລະກິດມາແລ້ວຢ່າງໜ້ອຍ 5ປີ<br>2. ຕ້ອງມີວິຊາການດ້ານຂົນສົ່ງລະດັບປະລິນຍາຕີຂຶ້ນໄປທີ່ມີປະສົບການຢ່າງໜ້ອຍ 2ປີ, ກວມຈໍານວນ20 ຂອງພະນັກງານທັງໝົດ<br>3. ມີລົດແທັກຊີຈໍານວນ20ຄັນຂຶ້ນໄປມີເຕັກນິກ 100%<br>4. ມີລະບົບບັນຊາ ລະບົບສື່ສານຄົບຊຸດ<br>5. ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ 5ຕື້ກີບຂຶ້ນໄປ |
| 2 | | ການດໍາເນີນທຸລະກິດຂົນສົ່ງສິນຄ້າພາຍໃນປະເທດ | 1. ລະດັບຜູ້ບໍລິຫານຕ້ອງມີປະສົບການດ້ານການຄຸ້ມຄອງທຸລະກິດມາແລ້ວຢ່າງໜ້ອຍ 5ປີ<br>2. ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ ກວມ20% ຂອງຈໍານວນພົນທັງໝົດ.ນໍາໃຊ້ວິຊາການຄົນລາວ ແລະ ປະສົບການຢ່າງໜ້ອຍ2ປີ<br>3. ມີທຶນຈົດທະບຽນຢ່າງໜ້ອຍ 3ຕື້ກີບຂຶ້ນໄປ<br>4. ຕ້ອງມີລົດຂົນສົ່ງສິນຄ້າ20ຄັນຂຶ້ນໄປມີເຕັກນິກ100%<br>5. ສາມາດລົງທຶນໄດ້100% ,ການຖືຮຸ້ນແມ່ນນັກລົງທຶນ ທັງສອງຝ່າຍກໍານົດນໍາກັນຕາມຄວາມສາມາດຂອງແຕ່ລະຝ່າຍ. |
| 3 | | ການດໍາເນີນທຸລະກິດຂົນສົ່ງສິນຄ້າລະຫວ່າງປະເທດ, ຂ້າມ | 1. ລະດັບຜູ້ບໍລິຫານຕ້ອງມີປະສົບການດ້ານການຄຸ້ມຄອງທຸລະກິດມາ |

| | | | |
|---|---|---|---|
| | | ປະເທດ | ແລ້ວຢ່າງໜ້ອຍ 5ປີ<br>2. ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ ກວມ20% ຂອງຈຳນວນພົນທັງໝົດ.ນຳໃຊ້ວິຊາການຄົນລາວ ແລະ ປະສົບການຢ່າງໜ້ອຍ2ປີ<br>3. ມີທຶນຈົດທະບຽນຢ່າງໜ້ອຍ 5ຕື້ກີບຂຶ້ນໄປ<br>4. ຕ້ອງມີລົດຂົນສົ່ງສິນຄ້າ20ຄັນຂຶ້ນໄປມີເຕັກນິກ100%<br>5. ຕ້ອງເປັນວິສາຫະກິດຂະໜາດໃຫຍ່ ແລະ ມີເຕັກໂນໂລຊີສູງ,ຕ່າງປະເທດສາມາດຖືຫຸ້ນໄດ້ສູງສຸດ 49% |
| 4 | | ການດຳເນີນທຸລະກິດຈັດສົ່ງສິນຄ້າພາຍໃນປະເທດ | 1. ຜູ້ບໍລິຫານມີປະສົບການດ້ານການຄຸ້ມຄອງທຸລະກິດມາແລ້ວຢ່າງໜ້ອຍ 5ປີ<br>2. ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ ກວມ20% ຂອງຈຳນວນພົນທັງໝົດ.ນຳໃຊ້ວິຊາການຄົນລາວ ແລະ ປະສົບການຢ່າງໜ້ອຍ 2 ປີ<br>3. ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ 3ຕື້ກີບຂຶ້ນໄປ.<br>4. ຖ້າແມ່ນການລົງທຶນຂອງຕ່າງປະເທດ ຕ້ອງເປັນວິສາຫະກິດປະສົມລະຫວ່າງ ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ,ຊຶ່ງຜູ້ລົງທຶນພາຍໃນຕ້ອງຖືຮຸ້ນຫລາຍ ກວ່າ 50% ຂອງທຶນທັງໝົດ ແລະ ມີອຳນາດຄຸ້ມຄອງທຸລະກິດຫລາຍກວ່າ |
| 5 | | ການດຳເນີນທຸລະກິດຈັດສົ່ງສິນຄ້າລະຫວ່າງປະເທດ | 1. ຜູ້ບໍລິຫານມີປະສົບການດ້ານການຄຸ້ມຄອງທຸລະກິດມາແລ້ວ ຢ່າງໜ້ອຍ 5ປີ<br>2. ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ ກວມ20% ຂອງຈຳນວນພົນທັງໝົດ.ນຳໃຊ້ວິຊາການຄົນລາວ ແລະ ປະສົບການຢ່າງໜ້ອຍ 2 ປີ<br>3. ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ 3ຕື້ກີບຂຶ້ນໄປ<br>4. ຖ້າແມ່ນການລົງທຶນຂອງຕ່າງປະເທດຕ້ອງເປັນ ວິສາຫະກິດປະສົມລະຫວ່າງ ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ,ຊຶ່ງຜູ້ລົງທຶນພາຍໃນຕ້ອງຖືຮຸ້ນຫລາຍກວ່າ 50% ຂອງທຶນທັງໝົດ ແລະ ມີອຳນາດຄຸ້ມຄອງທຸລະກິດຫລາຍກວ່າ |
| 6 | | ການດຳເນີນທຸລະກິດສະຖານີ ຂົນສົ່ງສິນຄ້າພາຍໃນປະເທດ, ລະຫວ່າງປະເທດ ແລະ ຜ່ານແດນ | 1. ຜູ້ບໍລິຫານມີປະສົບການດ້ານການຄຸ້ມຄອງທຸລະກິດມາແລ້ວ ຢ່າງໜ້ອຍ 5ປີ<br>2. ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ ກວມ 20% ຂອງຈຳນວນພົນທັງໝົດ. ນຳໃຊ້ວິຊາການຄົນລາວ ແລະ ປະສົບການຢ່າງໜ້ອຍ 2 |

| | | | |
|---|---|---|---|
| | | | ປີ<br>3. ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ 5ຕື້ກີບຂຶ້ນໄປ, ສຳລັບການບໍລິການພາຍໃນປະເທດ ແລະ 10ຕື້ກີບຂຶ້ນໄປສຳລັບບໍລິການລະຫວ່າງປະເທດ ແລະ ຜ່ານແດນ.<br>4. ຖ້າແມ່ນການລົງທຶນຂອງຕ່າງປະເທດຕ້ອງເປັນວິສາຫະກິດປະສົມລະຫວ່າງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ,ຊຶ່ງຜູ້ລົງທຶນພາຍໃນຕ້ອງຖືຮຸ້ນຫລາຍກວ່າ 50% ຂອງທຶນທັງໝົດ ແລະ ມີອຳນາດຄຸ້ມຄອງທຸລະກິດຫລາຍກວ່າ |
| 7 | | ການດຳເນີນທຸລະກິດບໍລິການເຊົ່າລົດ (ລົດເບົາ, ບັນທຸກ ແລະ ກົນຈັກໜັກ) | 1. ຜູ້ບໍລິຫານມີປະສົບການດ້ານການຄຸ້ມຄອງທຸລະກິດມາແລ້ວຢ່າງໜ້ອຍ5ປີ<br>2. ຕ້ອງມີວິຊາການດ້ານຂົນສົ່ງຊັ້ນສູງຂຶ້ນໄປ ກວມ20% ຂອງຈຳນວນພົນທັງໝົດ.ນຳໃຊ້ວິຊາການຄົນລາວ ແລະ ປະສົບການຢ່າງໜ້ອຍ 2 ປີ<br>3. ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ 3ຕື້ກີບຂຶ້ນໄປ, ສຳລັບລົງທຶນພາຍໃນ 5ຕື້ກີບຂຶ້ນໄປສຳລັບການລົງທຶນຂອງຕ່າງປະເທດ.<br>4. ມີລົດເຊົ່າ(ລົດເບົາແລະລົດບັນທຸກໃໝ່100% )ຈຳນວນ20ຄັນຂຶ້ນໄປ, ສຳລັບກົນຈັກໜັກຕ້ອງມີໃຫ້ເຊົ່າຢ່າງໜ້ອຍ 5ຄັນ ມີເຕັກນິກ 80% ຂຶ້ນໄປ.<br>5. ຖ້າແມ່ນການລົງທຶນຂອງຕ່າງປະເທດຕ້ອງເປັນວິສາຫະກິດປະສົມລະຫວ່າງຜູ້ລົງທຶນພາຍໃນ ແລະ ຕ່າງປະ ເທດ,ຊຶ່ງຜູ້ລົງທຶນພາຍໃນຕ້ອງຖືຮຸ້ນຫລາຍກວ່າ 50% ຂອງທຶນທັງໝົດ ແລະ ມີອຳນາດຄຸ້ມຄອງທຸລະກິດຫລາຍກວ່າ |
| 8 | | ການອະນຸຍາດສ້າງຕັ້ງສູນກວດກາເຕັກນິກຍານພາຫານະ | 1. ມີສະຖານທີ່ເໝາະສົມຮັບປະກັນສິ່ງແວດລ້ອມ<br>2. ໂຄງປະກອບສ້າງຂອງໂຮງງານທີ່ຖືກຕ້ອງຕາມລະບຽບການທີ່ກະຊວງ ຍທຂ ວາງອອກ<br>3. ມີເຄື່ອງມືອຸປະກອນທີ່ທັນສະໄໝທຽບເທົ່າສາກົນ<br>4. ເປັນການລົງທຶນພາຍໃນ, ປະສົມກັບຕ່າງປະເທດ ຫລື ລົງທຶນຕ່າງປະເທດໄດ້ 100% ແຕ່ຕ້ອງມີທຶນຈົດທະບຽນ 1ຕື້ກີບຂຶ້ນໄປ. |
| 9 | | ການອະນຸຍາດສ້າງຕັ້ງອູ່ສ້ອມແປງຍານພາຫານະ ແລະ ກົນຈັກ | 1. ມີສະຖານທີ່ເໝາະສົມຮັບປະກັນສິ່ງແວດລ້ອມ<br>2. ໂຄງປະກອບສ້າງຂອງໂຮງງານທີ່ຖືກຕ້ອງຕາມລະບຽບການ ທີ່ກະຊວງ ຍທຂ ວາງອອກ<br>3. ມີເຄື່ອງມືອຸປະກອນທີ່ທັນສະໄໝທຽບເທົ່າສາກົນ |

| | | | |
|---|---|---|---|
| | | | 4. ເປັນການລົງທຶນພາຍໃນ, ປະສົມກັບຕ່າງປະເທດ ຫລື ລົງທຶນຕ່າງປະເທດໄດ້ 100% ແຕ່ຕ້ອງມີທຶນຈົດທະບຽນ 1.5ຕື້ກີບຂຶ້ນໄປ |
| 10 | | ໂຮງຮຽນສອນຂັບລົດພາຫານະທົ່ວໄປ | 1. ມີຄູສອນພາກທິດສະດີຢ່າງໜ້ອຍ1ຄົນ, ຈົບວິຊາສະເພາະກົນຈັກ, ຜ່ານການຝຶກອົບຮົມການສິດສອນ ຢ່າງຖືກຕ້ອງ<br>2. ມີຄູສອນພາກປະຕິບັດຕົວຈິງ ຢ່າງໜ້ອຍສອງຄົນມີໃບຂັບຂີ່ປະເພດ C ເປັນຢ່າງຕ່ຳ ມີປະສົບການໃນການຂັບຂີ່ຢ່າງໜ້ອຍ 5ປີ,<br>3. ມີທີ່ຕັ້ງ ແລະ ສິ່ງປຸກສ້າງຢ່າງຖາວອນ, ມີຫ້ອງ ການ, ຫ້ອງຮຽນທີ່ປະກອບດ້ວຍອຸປະກອນການສິດ ສອນຢ່າງຄົບຊຸດ ແລະ ທັນສະໄໝ, ມີເດີ່ນຝຶກ ແອບຢ່າງກ້ວາງຂວາງສ້າງເປັນແບບສວນຈາລະຈອນ<br>4. ມີພາຫານະຮຽນຂັບຢ່າງໜ້ອຍ 3ຄັນ<br>5. ມີເອກະສານສິດສອນຜ່ານການຮັບຮູ້ໂດຍກົມຂົນສົ່ງ<br>6. ມີທຶນຫລາຍກວ່າ 8ຕື້ກີບ<br>7. ເປັນການລົງທຶນພາຍໃນສົມທົບກັບຕ່າງປະເທດ ພາຍໃນ 51% ແລະ ຕ່າງປະເທດ 49% |
| 11 | | ໂຮງຮຽນສອນຂັບລົດພາຫານະກົນຈັກໜັກ | 1. ລະດັບຜູ້ບໍລິຫານຕ້ອງຈົບວິຊາສະເພາະກົນຈັກໜັກຂຶ້ນໄປ<br>2. ມີຄູສອນພາກທິດສະດີແລະພາກປະຕິບັດຕົວຈິງ(ກົນຈັກໜັກ)<br>3. ຕ້ອງມີເດີ່ນຝຶກແອບການຂັບຂີ່<br>4. ມີພາຫານະຮຽນຂັບ 5 ຊະນິດຂຶ້ນໄປ,ຕາມລະບຽບການສ້າງຕັ້ງທີ່ກະຊວງ ຍທຂ ວາງອອກ<br>5. ມີເອກະສານຄູ່ມືການສິດສອນທີ່ຮັບຮອງຈາກສະຖາບັນ<br>6. ມີທຶນຈົດທະບຽນ 15 ຕື້ກີບຂຶ້ນໄປ<br>7. ເປັນການລົງທຶນພາຍໃນ ປະສົມກັບຕ່າງປະເທດ ຫລື ລົງທຶນຕ່າງປະເທດ 100% |
| 12 | | ອອກແບບສຳຫລວດ ການຈະລາຈອນ,ການແຕ້ມເສັ້ນ ແລະ ເຄື່ອງໝາຍການຈະລາຈອນ,ກວດສອບຄວາມປອດໄພຂອງເສັ້ນທາງ | 1. ລະດັບຜູ້ບໍລິຫານຕ້ອງມີຄວາມຮູ້ດ້ານຂົວທາງ, ວິສະວະກຳການຈະລາຈອນຢ່າງໜ້ອຍຊັ້ນກາງຂຶ້ນໄປ<br>2. ມີທີມງານວິຊາການທີ່ຜ່ານການຝຶກອົບຮົມກ່ຽວກັບ ວິສະວະກຳການຈະລາຈອນ,ມີຄວາມຊຳນານ ແລະມີປະສົບການມາແລ້ວ3ປີ,1ຄົນຂຶ້ນໄປ<br>3. ມີເຄື່ອງມື ແລະ ອຸປະກອນພະລິດ ແລະ ຕິດຕັ້ງປ້າຍທີ່ ທັນສະໄໝ |
| II, | ຂະແໜງກໍ່ສ້າງພື້ນຖານໂຄງລ່າງຄົມມະນາຄົມ | | |
| 1 | 7421 | ສຳຫລວດ ອອກແບບ ແລະ ທີ່ປຶກສາ | 1. ໄດ້ຮັບອະນຸມັດຈາກລັດຖະບານແລະຕ້ອງປະຕິບັດ ຕາມກົດໝາຍ |

| | | | |
|---|---|---|---|
| | | | ສົ່ງເສີມການລົງທຶນເປັນຫລັກ ແລະ ລະບຽບການຕ່າງໆຂອງຂະແໜງກ່ຽວຂ້ອງ ໃນນັ້ນກ່ອນແລະຫລັງການລົງທຶນແລ້ວ ໃນການດຳເນີນທຸລະກິດຕ້ອງໄດ້ຮັບການກວດກາ, ອະນຸຍາດຈາກ ຂະແໜງວິຊາການທີ່ກ່ຽວຂ້ອງ.<br>2. ການສ້າງຕັ້ງວິສາຫະກິດປະສົມລະຫວ່າງ ຜູ້ລົງທຶນຕ່າງປະເທດ ກັບຜູ້ລົງທຶນພາຍໃນ, ແມ່ນໃຫ້ທັງສອງຝ່າຍຕົກລົງກັນເອງຕາມ ຄວາມເໝາະສົມ.<br>3. ຮູບການລົງທຶນຂອງຕ່າງປະເທດ 100% ແມ່ນບໍ່ເຫັນດີ ຕ້ອງເປັນການລົງທຶນຂະໜາດໃຫຍ່. |
| 2 | | ການກໍ່ສ້າງ ທາງ ແລະ ຂົວ | 1. ໄດ້ຮັບອະນຸມັດຈາກລັດຖະບານ ແລະຕ້ອງປະຕິບັດຕາມກົດໝາຍສົ່ງເສີມການລົງທຶນເປັນຫລັກ ແລະ ລະບຽບການຕ່າງໆຂອງ ຂະແໜງກ່ຽວຂ້ອງ ໃນນັ້ນ ກ່ອນ ແລະ ຫລັງການລົງທຶນແລ້ວ ໃນການດຳເນີນທຸລະກິດຕ້ອງໄດ້ຮັບການກວດກາ, ອະນຸຍາດຈາກ ຂະແໜງວິຊາການທີ່ກ່ຽວຂ້ອງ.<br>2. ໃນການຖືຮຸ້ນແມ່ນພາຍໃນຕ້ອງຖືຮຸ້ນຫລາຍກວ່າ 50%<br>3. ຮູບການລົງທຶນຂອງຕ່າງປະເທດ 100% ແມ່ນບໍ່ເຫັນດີ. ແຕ່ຕ້ອງເປັນການລົງທຶນຂະໜາດໃຫຍ່ ແລະ ທຶນທັງໝົດຕ້ອງແມ່ນ 240ຕື້ກີບຂຶ້ນໄປ |
| III | | ຂະແໜງເຄຫາ-ຜັງເມືອງ | |
| 1 | 7421 | ຄົ້ນຄ້ວາ, ສຳຫລວດ ອອກແບບ ແລະ ທີ່ປຶກສາ | 1. ໄດ້ຮັບການອະນຸມັດຈາກລັດຖະບານແລະ ຕ້ອງປະຕິບັດຕາມລະບຽບກົດໝາຍການລົງທຶນເປັນຫລັກ ແລະ ລະບຽບການຕ່າງໆຂອງຂະແໜງການກ່ຽວ ຂ້ອງ, ໃນນັ້ນ ກ່ອນແລະຫລັງໄດ້ຮັບການລົງທຶນແລ້ວ, ໃນການດຳເນີນທຸລະກິດຕ້ອງໄດ້ຮັບການກວດກາອະນຸຍາດຈາກຂະແໜງວິຊາການຄຸ້ມຄອງກ່ຽວຂ້ອງ<br>2. ການສ້າງຕັ້ງວິສາຫະກິດປະສົມລະຫວ່າງຜູ້ລົງທຶນຕ່າງປະເທດກັບຜູ້ລົງທຶນພາຍໃນແມ່ນຜູ້ລົງທຶນພາຍໃນຕ້ອງຖືຮຸ້ນ 51% ຂຶ້ນໄປ.<br>3. ຮູບການວິສາຫະກິດທີ່ລົງທຶນຕ່າງປະເທດພຽງຝ່າຍດຽວແມ່ນບໍ່ເຫັນດີ |
| 2<br>3<br>4 | | ສຶກສາຄວາມເປັນໄປໄດ້ຂອງໂຄງການ<br>ສຳຫລວດ ອອກແບບ ເຄຫາສະຖານ ແລະ ຜັງເມືອງ | 1. ທຶນຈົດທະບຽນຢ່າງໜ້ອຍຕ້ອງ 4ຕື້ກີບຂຶ້ນໄປ<br>2. ຖ້າໂຄງການຂະໜາດໃຫຍ່ທຶນຈົດທະບຽນຢ່າງໜ້ອຍຕ້ອງ 8 ຕື້ກີບຂຶ້ນໄປ.<br>3. ມີນັກສະຖາປານິກແລະນັກວິສະວະກອນທີ່ມີຄວາມຮູ້,ຄວາມ |

| | | | |
|---|---|---|---|
| | | ສຳຫລວດຕົບແຕ່ງພາຍໃນ ແລະ ພາຍນອກ | ສາມາດແລະປະສົບການຕົວຈິງສົມຄູ່ກັບຂະໜາດ ແລະ ລະດັບຂອງການລົງທຶນ.<br>4. ມີປະສົບການ ແລະ ຜົນງານຕົວຈິງທີ່ເໝາະສົມກັບ ປະເພດຂະໜາດ ລະດັບໂຄງການທີ່ຕ້ອງການລົງ ທຶນ<br>5. ມີຫ້ອງການ,ພາຫານະ,ເຄື່ອງຮັບໃຊ້ທີ່ໄດ້ມາດຕະ ຖານໃນລະດັບ 90% ຂຶ້ນໄປ.<br>6. ຕ້ອງເຂົ້າຮ່ວມເປັນສະມາຊິກສົມທົບຂອງສະຖາປານິກ ແລະ ວິສະວະກອນລາວ(ສສລ)<br>7. ວາງແຜນຜັງເມືອງຕ້ອງຮ່ວມກັບອົງການກ່ຽວຂ້ອງຂອງລາວ<br>8. ປະຕິບັດຕາມກົດໝາຍຜັງເມືອງ,ລະບຽບການວາງແຜນຜັງຕົວເມືອງ, ລະບຽບການຄຸ້ມຄອງການປຸກສ້າງ<br>9. ປະຕິບັດຕາມກົດໝາຍກໍ່ສ້າງ,ລະບຽບການສ້າງຕັ້ງບໍລິສັດສຳຫລວດ, ອອກແບບແລະກໍ່ສ້າງເຄຫາສະຖານ<br>10. ປະຕິບັດຕາມຂໍ້ກຳນົດ ແລະ ມາດຕະຖານເຕັກນິກ ຕ່າງໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ. |
| 5 | | ສຳຫລວດອອກແບບ ເຄຫາສະຖານ ແລະ ຜັງເມືອງ | 1. ໄດ້ຮັບການອະນຸມັດຈາກລັດຖະບານ ແລະ ຕ້ອງປະຕິບັດຕາມກົດໝາຍການລົງທຶນເປັນຫລັກ ແລະ ລະບຽບການຕ່າງໆຂອງຂະແໜງການກ່ຽວຂ້ອງ ໃນນັ້ນ, ກ່ອນ ແລະ ພາຍຫລັງໄດ້ຮັບການລົງທຶນແລ້ວ, ໃນການດຳເນີນທຸລະກິດຕ້ອງໄດ້ຮັບການກວດກາ, ອະນຸຍາດຈາກຂະແໜງການຄຸ້ມຄອງກ່ຽວຂ້ອງ.<br>2. ການສ້າງຕັ້ງວິສາຫະກິດປະສົມລະຫວ່າງຜູ້ລົງທຶນຕ່າງປະເທດກັບພາຍໃນ, ແມ່ນຜູ້ລົງທຶນພາຍໃນຕ້ອງຖືຮຸ້ນຢ່າງໜ້ອຍ 51% ຂຶ້ນໄປ.<br>3. ຮູບການລົງທຶນຂອງຕ່າງປະເທດພຽງຝ່າຍດຽວແມ່ນບໍ່ອະນຸຍາດ<br>4. ມີນັກສະຖາປະນິກ ແລະ ວິສະວະກອນທີ່ມີຄວາມຮູ້, ຄວາມສາມາດປະສົບການຕົວຈິງ ສົມຄູ່ກັບຂະໜາດແລະລະດັບຂອງການລົງທຶນ<br>5. ມີປະສົບການຜົນງານຕົວຈິງທີ່ເໝາະສົມກັບປະເພດ ຂະໜາດ ແລະ ລະດັບຂອງໂຄງການທີ່ຕ້ອງການລົງທຶນ<br>6. ມີຫ້ອງການ,ພາຫານະ, ເຄື່ອງຮັບໃຊ້ທີ່ມີມາດຕະ ຖານລະດັບດີ 90% ຂຶ້ນໄປ. |
| 6 | | ສຳຫລວດ ຕົກແຕ່ງ ພາຍໃນ ພາຍນອກ | |
| 7 | | ສຳຫລວດອອກແບບ ວິສະວະກຳກໍ່ສ້າງ | |
| 8 | | ທີ່ປຶກສາການກໍ່ສ້າງ | |
| 9 | | ການກໍ່ສ້າງ | |
| 10 | | ບູລະນະເຄຫາສະຖານທີ່ກໍ່ສ້າງ (ຂຸດດິນ,ຖົມດິນ) | 1. ໄດ້ຮັບອະນຸຍາດການດຳເນີນທຸລະກິດຈາກຂະແໜງການກ່ຽວຂ້ອງ<br>2. ທຶນຈົດທະບຽນຢ່າງໜ້ອຍ 8ຕື້ກີບຂຶ້ນໄປ |
| 11 | | ການກໍ່ສ້າງຄົບຊຸດ | |

| | | | |
|---|---|---|---|
| 12 | | ການປະກອບຕິດຕັ້ງເປັນຊິ້ນສ່ວນ(ສິ່ງປູກສ້າງ) | 3. ໂຄງການຂະໜາດໃຫຍ່ມູນຄ່າ40ຕື້ກີບຂຶ້ນໄປ<br>4. ເຂົ້າຮ່ວມເປັນສະມາຊິກສົມທົບຂອງສະມາຄົມສະຖາປານິກ ແລະ ວິສະວະກອນລາວ(ສສລ)<br>5. ມີຫ້ອງການ, ກົນຈັກ, ພາຫານະໃນລະດັບດີ 90% ຂຶ້ນໄປ<br>6. ຕ້ອງຮ່ວມມືກັບອົງການຄຸ້ມຄອງກ່ຽວຂ້ອງຂອງລາວ |
| 13 | | ການປະດັບປະດາຕຶກແຕ່ງພາຍໃນ-ພາຍນອກ(ຊໍ່າທ້າຍ) | |
| 14 | | ການສ້າງຕັ້ງວິສາຫະກິດນ້ຳປະປາ | 1. ມີປະສົບການ ຫລື ມີນັກວິຊາການກ່ຽວກັບການດຳເນີນທຸລະກິດ<br>2. ມີນັກວິຊາການທີ່ມີຄວາມສາມາດທາງດ້ານເຕັກນິກນ້ຳປະປາ ແລະ ນັກວິຊາການອື່ນທີ່ກ່ຽວຂ້ອງໃນຈຳນວນທີ່ເໝາະສົມກັບຂະໜາດຂອງກິດຈະການເຊັ່ນ: ນັກວິໄຈນ້ຳ,ນັກວິຊາການໄຟຟ້າ, ນັກວິຊາການຄຸ້ມຄອງ, ນັກວິຊາການບັນຊີ ແລະ ອື່ນໆ<br>3. ມີທຶນ, ພາຫານະ, ກົນຈັກ ແລະ ອຸປະກອນພຽງພໍ ແລະ ເໝາະສົມເພື່ອກໍ່ສ້າງ ແລະ ຕິດຕັ້ງລະບົບນ້ຳປະປາແລະ ໃຫ້ການບໍລິການໃນພື້ນທີ່ບໍລິການຂອງຕົນ<br>4. ມີພື້ນທີ່ບໍລິການທີ່ໄດ້ຮັບການເຫັນດີ ແລະ ຮັບຮອງເອົາຢ່າງເປັນທາງການຈາກອົງການຄຸ້ມຄອງວຽກງານນ້ຳປະປາ<br>5. ມີແຫຼ່ງນ້ຳທີ່ໄດ້ຮັບການເຫັນດີ ຈາກອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ( ລາຍລະອຽດໃນກົດໝາຍ ນ້ຳປະປາປີ 2010) |
| IV | | ຂະແໜງໂຍທາທິການທາງນ້ຳ | |
| 1 | | ການດຳເນີນທຸລະກິດຂົນສົ່ງສິນຄ້າ ໂດຍສານທາງນ້ຳ ພາຍໃນ ແລະ ລະຫວ່າງປະເທດ | ໃນການດຳເນີນທຸລະກິດ ຕ້ອງໄດ້ກຳນົດເສັ້ນທາງການຂົນສົ່ງເຊິ່ງພົວພັນເຖິງເສັ້ນທາງການເດີນເຮືອທີ່ເປັນຍຸດທະສາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ<br>1. ຜູ້ອຳນວຍການ ຫລື ຜູ້ຈັດການບໍລິສັດທີ່ມີຄວາມຮູ້ດ້ານການຄຸ້ມຄອງການຂົນສົ່ງ ແລະ ມີປະສົບການດ້ານການບໍລິຫານງານ<br>2. ຕ້ອງມີວິຊາການດ້ານວິຊາສະເພາະ ການຂົນສົ່ງລະດັບຊັ້ນສູງຂຶ້ນໄປຢ່າງໜ້ອຍ 2ຄົນ ແລະ ມີປະສົບການຢ່າງໜ້ອຍ2ປີຂຶ້ນໄປ<br>3. ຕ້ອງມີທຶນເປັນເງິນໂດຍມີບັນຊີເງິນຝາກທີ່ທະນາຄານ ຫລື ມີຫລັກຊັບເປັນຊັບສິນຄົງທີ່.<br>4. ຕ້ອງມີພາຫານະຂົນສົ່ງ(ເຮືອ)ທີ່ຜ່ານການກວດກາເຕັກນິກ ແລະ ຂຶ້ນທະບຽນຢ່າງຖືກຕ້ອງລວມທັງຕ້ອງມີເຄື່ອງມື ແລະ ອຸປະກອນອື່ນໆທີ່ແທດເໝາະກັບຂະໜາດຂອງທຸລະກິດ<br>5. ຕ້ອງມີສຳນັກງານຫ້ອງການທີ່ເໝາະສົມກັບຂະໜາດຂອງທຸລະກິດບໍ່ກີດຂວາງຕໍ່ການຈໍລະຈອນແລະມີຜົນກະທົບຕໍ່ສິ່ງແວດລ້ອມ<br>6. ຕ້ອງມີສາຍທາງຂົນສົ່ງທີ່ແນ່ນອນໂດຍໄດ້ຮັບການຢັ້ງຢືນຈາກ |

| | | | |
|---|---|---|---|
| | | | ພາກສ່ວນກ່ຽວຂ້ອງທັງຕົ້ນທາງ ແລະ ປາຍທາງ |
| 2 | | ການບໍລິການທ່າເຮືອ, ການຍົກຖ່າຍ, ການຫຸ້ມຫໍ່ ແລະ ລະບົບສາງ | ຍ້ອນວ່າການບໍລິການທ່າເຮືອແມ່ນການບໍລິການສັງຄົມ, ການຍົກຖ່າຍ, ການຫຸ້ມຫໍ່ ແລະ ລະບົບສາງຕ້ອງໄດ້ມີການຈັດລະບົບຄັກແນ່ເພື່ອບໍ່ໃຫ້ມີຜົນກະທົບຕໍ່ສະພາບແວດລ້ອມ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ<br>1. ຜູ້ອຳນວຍການ ຫລື ຜູ້ຈັດການບໍລິສັດ ທີ່ມີຄວາມຮູ້ດ້ານການຄຸ້ມຄອງທ່າເຮືອ ແລະ ປະສົບການໃນການບໍລິຫານງານ<br>2. ຕ້ອງມີວິຊາການດ້ານວິຊາສະເພາະການຂົນສົ່ງ ຫລື ການບໍລິຫານທ່າເຮືອ ລະດັບຊັ້ນສູງຂຶ້ນໄປຢ່າງໜ້ອຍ 2ຄົນ ແລະ ມີປະສົບການມາແລ້ວຢ່າງໜ້ອຍ2ປີຂຶ້ນໄປ<br>3. ຕ້ອງມີທຶນເປັນເງິນໂດຍມີບັນຊີເງິນຝາກ ທີ່ທະນາ ຄານ ຫລື ມີຫລັກຊັບເປັນຊັບສົມບັດຄົງທີ່.<br>4. ຕ້ອງມີເຄື່ອງມື ອຸປະກອນການຍົກຖ່າຍທີ່ໄດ້ມາດ ຕະຖານ, ມີສາງ ແລະ ສຳນັກງານ ຫ້ອງການທີ່ເໝາະສົມກັບຂະໜາດທຸລະກິດ |
| 3 | | ອູ່ສ້ອມແປງ ແລະ ຕໍ່ເຮືອ | ຍ້ອນວ່າອູ່ຕໍ່ເຮືອແມ່ນຕ້ອງມີເນື້ອທີ່ເໝາະສົມ ຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ<br>1. ອູ່ເຮືອຕ້ອງມີຜູ້ອຳນວຍການຫລືຜູ້ຈັດການທີ່ມີຄວາມຮູ້ດ້ານການຄຸ້ມຄອງອູ່ຕໍ່ເຮືອ ແລະ ສ້ອມແປງເຮືອແລະ ມີປະສົບການໃນການບໍລິຫານງານ<br>2. ຕ້ອງມີວິຊາການດ້ານວິຊາສະເພາະດ້ານວິສະວະກຳການຕໍ່ເຮືອຢ່າງໜ້ອຍ 2ຄົນ ແລະ ມີປະສົບການມາແລ້ວຢ່າງໜ້ອຍ 2ປີຂຶ້ນໄປ<br>3. ຕ້ອງມີທຶນເປັນເງິນໂດຍມີບັນຊີເງິນຝາກທະນາຄານຫລືມີຊັບສົມບັດຄົງທີ່<br>4. ຕ້ອງມີເຄື່ອງມືອຸປະກອນທີ່ເປັນພື້ນຖານໃນການຕໍ່ເຮືອທີ່ທັນສະໄໝ<br>5. ມີສຳນັກງານຫ້ອງການແລະມີສຳນັກງານທີ່ເໝາະສົມຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ |
| 4 | | ບໍລິການເຮືອທ່ອງທ່ຽວ | ເປັນການບໍລິການສັງຄົມໂດຍກົງ ຕ້ອງມີພາຫານະເປັນຂອງຕົນເອງ ແລະ ມີຄວາມຮັບປະກັນທຸກດ້ານທາງດ້ານບໍລິການ ແລະ ພາຫານະການທ່ອງທ່ຽວ.<br>1. ຜູ້ອຳນວຍການຫລືຜູ້ຈັດການບໍລິສັດທີ່ມີຄວາມຮູ້ດ້ານການຄຸ້ມຄອງການຂົນສົ່ງແລະມີປະສົບການດ້ານການບໍລິຫານງານ<br>2. ຕ້ອງມີວິຊາການດ້ານວິຊາສະເພາະການຂົນສົ່ງລະດັບຊັ້ນສູງຂຶ້ນໄປຢ່າງໜ້ອຍສອງຄົນແລະມີປະສົບການມາແລ້ວຢ່າງໜ້ອຍສອງປີຂຶ້ນໄປ<br>3. ຕ້ອງມີທຶນເປັນເງິນຝາກທະນາຄານຫລືມີຫລັກຊັບເປັນຊັບສົມບັດຄົງ |

| | | | |
|---|---|---|---|
| | | | ທີ່<br>4. ຕ້ອງມີພາຫານະຂົນສົ່ງ(ເຮືອ)ທີ່ຜ່ານການກວດກາເຕັກນິກແລະຂຶ້ນທະບຽນຢ່າງຖືກຕ້ອງ ລວມທັງຕ້ອງມີເຄື່ອງມື ຫລື ອຸປະກອນອື່ນໆທີ່ແທດເໝາະກັບຂະໜາດຂອງທຸລະກິດ<br>5. ຕ້ອງມີສຳນັກງານຫ້ອງການທີ່ເໝາະສົມກັບຂະໜາດຂອງທຸລະກິດບໍ່ກີດຂວາງຕໍ່ການຈໍລະຈອນແລະບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ<br>6. ຕ້ອງມີສາຍທາງຂົນສົ່ງທີ່ແນ່ນອນໂດຍຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງທັງຕົ້ນທາງ ແລະ ປາຍທາງ |
| 5 | | ບໍລິສັດຂຸດຄົ້ນ ຫີນ,ແຮ່, ຊາຍ | 1. ຕ້ອງໄດ້ຮັບການອະນຸມັດຈາກພາກສ່ວນກ່ຽວຂ້ອງແລະ ປະຕິບັດຕາມກົດໝາຍການລົງທຶນເປັນຫລັກ<br>2. ຜູ້ອຳນວຍການຫລືຜູ້ຈັດການບໍລິສັດທີ່ມີຄວາມຮູ້ດ້ານການຄຸ້ມຄອງການກໍ່ສ້າງແລະ ມີປະສົບການດ້ານການບໍລິຫານງານ<br>3. ຕ້ອງມີປະສົບການດ້ານວິຊາສະເພາະດ້ານການກໍ່ສ້າງທົ່ວໄປລະດັບຊັ້ນສູງຂຶ້ນໄປຢ່າງໜ້ອຍ 2ຄົນແລະມີປະສົບການມາແລ້ວຢ່າງໜ້ອຍ 2ປີຂຶ້ນໄປ<br>4. ຕ້ອງມີທຶນເປັນເງິນໂດຍມີທຶນຊຶ່ງຝາກທະນາຄານຫລືມີຫລັກຊັບເປັນຊັບສົມບັດຄົງທີ່<br>5. ມີເຮືອດູດ,ພາຫານະກົນຈັກ ແລະ ເຄື່ອງອຸປະກອນທີ່ເປັນຂອງຕົນເອງທີ່ແທດເໝາະກັບຂະໜາດຂອງທຸລະກິດ<br>6. ຕ້ອງມີສຳນັກງານຫ້ອງການ ແລະ ສະຖານທີ່ເກັບຫີນ-ແຮ່-ຊາຍທີ່ເໝາະສົມກັບຂະໜາດຂອງທຸລະກິດບໍ່ກີດຂວາງຕໍ່ການຈໍລະຈອນ ແລະ ມີຜົນກະທົບຕໍ່ສິ່ງແວດລ້ອມ |
| 6<br><br><br>7<br><br><br><br>8 | | ການຂົນສົ່ງສິນຄ້າທາງທະເລ (Freiht Transportation for Maritime Transport CPC 724)<br>ການບໍລິການເກັບຮັກສາ ແລະ ສາງສິນຄ້າ (Storage and Ware housing Service CPC 724)<br>ການບໍລິການການຊ່ວຍເຫລືອ ແລະ ການເກັບກູ້ເຮືອທີ່ ບໍ່ຢູ່ໃນທ່າ(Vessels salvage and refloating services | 1. ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ<br>2. ຕ້ອງຢູ່ໃນກອບການບໍລິການພາຍໃນອາຊຽນແລະ ຕ້ອງປະຕິບັດຕາມສົນທິສັນຍາສາກົນທີ່ກ່ຽວຂ້ອງ |

| | | | |
|---|---|---|---|
| | | " not applicable in harbor" CPC 7454) | |
| V | | ຂະແໜງທາງລົດໄຟ | |
| 1 | | ການບໍລິການຂາຍປີ້ລົດໄຟ ແລະ ຈອງບ່ອນໂດຍສານທາງລົດໄຟ | 1. ຄຳຮ້ອງຂໍລົງທຶນ ແລະ ຂໍຂຶ້ນທະບຽນ, ຊຶ່ງຕ້ອງໄດ້ຜ່ານການຄົ້ນຄ້ວາ ແລະ ພິຈາລະນາ ແລະ ກວດສອບຈາກພາກສ່ວນທີ່ກ່ຽວຂ້ອງ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ<br>2. ຕ້ອງຜ່ານການຢັ້ງຢືນຄຸນນະພາບຈາກພາກສ່ວນທີ່ກ່ຽວຂ້ອງຂະແໜງການໂຍທາທິການ ແລະ ຂົນສົ່ງ |
| 2 | | ການບໍລິການສະໜອງເຄື່ອງອາໄຫລ່ ແລະ ອຸປະກອນສື່ສານ ຮັບໃຊ້ວຽກງານຂົນສົ່ງທາງລົດໄຟ | 1. ຄຳຮ້ອງຂໍລົງທຶນ ແລະ ຂໍຂຶ້ນທະບຽນ, ຊຶ່ງຕ້ອງໄດ້ຜ່ານການຄົ້ນຄ້ວາ ແລະ ພິຈາລະນາ ແລະ ກວດສອບຈາກພາກສ່ວນທີ່ກ່ຽວຂ້ອງ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ<br>2. ຕ້ອງຜ່ານການຢັ້ງຢືນຄຸນນະພາບ ຈາກພາກສ່ວນທີ່ກ່ຽວຂ້ອງຂະແໜງການໂຍທາທິການ ແລະ ຂົນສົ່ງ |
| 3 | | ການບໍລິການສະໜອງເຄື່ອງອາໄຫລ່ ແລະ ອຸປະກອນສ້ອມແປງລະບົບສັນຍານ | 1. ຄຳຮ້ອງຂໍລົງທຶນ ແລະ ຂໍຂຶ້ນທະບຽນ, ຊຶ່ງຕ້ອງໄດ້ຜ່ານການຄົ້ນຄ້ວາ ແລະ ພິຈາລະນາ ແລະ ກວດສອບຈາກພາກສ່ວນທີ່ກ່ຽວຂ້ອງຂອງຂະແໜງໂຍທາທິການ ແລະ ຂົນສົ່ງ<br>2. ຕ້ອງຜ່ານການຢັ້ງຢືນຄຸນນະພາບຈາກພາກສ່ວນທີ່ກ່ຽວຂ້ອງຂະແໜງການໂຍທາທິການ ແລະ ຂົນສົ່ງ |
| 5 | | ການບໍລິການຂົນສົ່ງສິນຄ້າທາງລົດໄຟ | 1. ຄຳຮ້ອງຂໍລົງທຶນ ແລະ ຂໍຂຶ້ນທະບຽນ, ຊຶ່ງຕ້ອງໄດ້ຜ່ານການຄົ້ນຄ້ວາ ພິຈາລະນາ ແລະ ກວດສອບຈາກພາກສ່ວນທີ່ກ່ຽວຂ້ອງ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ<br>2. ຕ້ອງມີສັນຍາຜູກພັນກັບຜູ້ສະໜອງ ແລະ ຜູ້ຮັບສິນຄ້າ |
| 6 | | ການບໍລິການອາຫານ ແລະ ເຄື່ອງດື່ມໃສ່ຂະບວນລົດໄຟຂົນສົ່ງໂດຍສານ | 1. ຄຳຮ້ອງຂໍລົງທຶນ ແລະ ຂໍຂຶ້ນທະບຽນ, ຊຶ່ງຕ້ອງໄດ້ຜ່ານການຄົ້ນຄ້ວາ ພິຈາລະນາ ແລະ ກວດສອບຈາກພາກສ່ວນທີ່ກ່ຽວຂ້ອງ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ<br>2. ຕ້ອງໄດ້ຮັບການຢັ້ງຢືນຄຸນນະພາບ ຈາກພາກສ່ວນທີ່ກ່ຽວຂ້ອງ |

ຈຶ່ງຮຽນສະເໜີມາຍັງທ່ານຊາບ ແລະ ພິຈາລະນາຕາມທາງຄວນ

ລັດຖະມົນຕີວ່າການ

ສົມມາດ ພົລເສນາ